ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
---===000===---

ຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ: 005/ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 08 DEC 2015

# ລະບຽບ
# ວ່າດ້ວຍ ການຄຸ້ມຄອງຜູ້ລົງທຶນຕ່າງປະເທດທີ່ເຄື່ອນໄຫວຊື້-ຂາຍຫຼັກຊັບ ຢູ່ ສປປ ລາວ
# (ສະບັບປັບປຸງ)

- ອີງຕາມກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ ລົງວັນທີ 10 ທັນວາ 2012;
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 188/ນຍ, ລົງວັນທີ 24 ກໍລະກົດ 2013;
- ອີງຕາມໜັງສືສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 034/ສຄຄຊ, ລົງວັນທີ 27 ຕຸລາ 2015.

## ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ອອກລະບຽບ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ລະບຽບສະບັບນີ້ກຳນົດ ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງຜູ້ລົງທຶນຕ່າງປະເທດ ເພື່ອອຳນວຍຄວາມສະດວກໃນການເຄື່ອນໄຫວຊື້-ຂາຍຫຼັກຊັບ ຢູ່ ສປປ ລາວ ແນໃສ່ປົກປ້ອງສິດຜົນປະໂຫຍດຂອງຊາດ ແລະ ສົ່ງເສີມການເຄື່ອນໄຫວວຽກງານຫຼັກຊັບ ໃຫ້ຂະຫຍາຍຕົວຢ່າງມີປະສິດທິພາບ, ໂປ່ງໃສ ແລະ ຍຸຕິທຳ.

**ມາດຕາ 2 ອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນລະບຽບສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ລົງທຶນຕ່າງປະເທດ** ໝາຍເຖິງ ຜູ້ລົງທຶນທີ່ມາຈາກຕ່າງປະເທດ;

- ຜູ້ລົງທຶນຕ່າງປະເທດ ປະກອບດ້ວຍ ຜູ້ລົງທຶນຕ່າງປະເທດປະເພດບຸກຄົນ ແລະ ຜູ້ລົງທຶນຕ່າງປະເທດ ປະເພດສະຖາບັນ;

2. ຜູ້ລົງທຶນຕ່າງປະເທດປະເພດສະຖາບັນ ປະກອບດ້ວຍ ບໍລິສັດຫຼັກຊັບ, ກອງທຶນຮ່ວມ, ທະນາຄານທຸລະກິດ, ບໍລິສັດບໍລິຫານຊັບສິນ, ບໍລິສັດປະກັນໄພ, ບໍລິສັດ ແລະ ອົງການຈັດຕັ້ງສາກົນ;

3. **ລະຫັດການຊື້-ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ** ໝາຍເຖິງ ລະຫັດທີ່ຕະຫຼາດຫຼັກຊັບອອກໃຫ້ແກ່ ຜູ້ລົງທຶນຕ່າງປະເທດ ເພື່ອຄຸ້ມຄອງການເຄື່ອນໄຫວຊື້-ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ ຢູ່ ສປປ ລາວ;
4. **ທະນາຄານຕົວແທນເພື່ອການຊໍາລະ** ໝາຍເຖິງ ທະນາຄານທຸລະກິດທີ່ເຮັດໜ້າທີ່ຊໍາລະເງິນ ໃນການຊື້-ຂາຍຫຼັກຊັບ;
5. **ຄວາມສາມາດທາງດ້ານການປະພຶດສໍາລັບບຸກຄົນ** ໝາຍເຖິງ ບຸກຄົນທີ່ມີອາຍຸ ສິບແປດປີຂຶ້ນໄປ ແລະ ບໍ່ເປັນບ້າເສຍຈິດ;
6. **ຄວາມສາມາດທາງດ້ານການປະພຶດສໍາລັບສະຖາບັນ** ໝາຍເຖິງ ສະຖາບັນທີ່ຖືກຮັບຮອງຈາກການຈັດຕັ້ງໃຫ້ເປັນນິຕິບຸກຄົນ.

**ມາດຕາ 3 ຂອບເຂດການນໍາໃຊ້**

ລະບຽບສະບັບນີ້ນໍາໃຊ້ສໍາລັບ ຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ, ທະນາຄານດູແລຊັບສິນ, ທະນາຄານຕົວແທນເພື່ອການຊໍາລະ, ບໍລິສັດອອກຈໍາໜ່າຍຫຼັກຊັບ, ບໍລິສັດຈົດທະບຽນ, ຜູ້ລົງທຶນຕ່າງປະເທດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກັບການເຄື່ອນໄຫວວຽກງານຫຼັກຊັບ ຢູ່ ສປປ ລາວ.

## ໝວດທີ 2
## ລະຫັດການຊື້-ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ

**ມາດຕາ 4 ການຂໍລະຫັດການຊື້-ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ**

ຜູ້ລົງທຶນຕ່າງປະເທດ ທີ່ມີຈຸດປະສົງຊື້-ຂາຍຫຼັກຊັບ ຢູ່ ສປປ ລາວ ຕ້ອງປະກອບເອກະສານ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 5 ຂອງລະບຽບສະບັບນີ້ຕໍ່ ຕະຫຼາດຫຼັກຊັບ ໂດຍມອບສິດຢ່າງເປັນລາຍລັກອັກສອນໃຫ້ແກ່ ທະນາຄານດູແລຊັບສິນ ຫຼື ບໍລິສັດຫຼັກຊັບ ເພື່ອເປັນຜູ້ຕາງໜ້າດໍາເນີນການຂໍລະຫັດການຊື້-ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ.

**ມາດຕາ 5 ເອກະສານປະກອບການຂໍລະຫັດການຊື້-ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ**

ເອກະສານປະກອບການຂໍລະຫັດການຊື້-ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ ປະເພດບຸກຄົນ ປະກອບມີ ດັ່ງນີ້:

1. ໃບຄໍາຮ້ອງຕາມແບບພິມຂອງຕະຫຼາດຫຼັກຊັບ;
2. ສໍາເນົາ ໜັງສືຜ່ານແດນ ຫຼື ບັດປະຈໍາຕົວ ທີ່ໄດ້ຮັບການຢັ້ງຢືນຈາກອົງການທີ່ມີສິດອໍານາດ;
3. ສໍາເນົາ ໃບແຕ່ງຕັ້ງ ຫຼື ສັນຍາ ກັບ ທະນາຄານດູແລຊັບສິນ ຫຼື ບໍລິສັດຫຼັກຊັບ.

ເອກະສານປະກອບການຂໍລະຫັດການຊື້-ຂາຍຫຼັກຊັບ ຂອງຜູ້ລົງທຶນຕ່າງປະເທດ ປະເພດສະຖາບັນ ປະກອບມີ ດັ່ງນີ້:

1. ໃບຄໍາຮ້ອງຕາມແບບພິມຂອງຕະຫຼາດຫຼັກຊັບ;
2. ສໍາເນົາ ກົດລະບຽບພາຍໃນ ແລະ ໃບທະບຽນວິສາຫະກິດ;
3. ສໍາເນົາ ໃບແຕ່ງຕັ້ງ ຫຼື ສັນຍາ ກັບທະນາຄານດູແລຊັບສິນ ຫຼື ບໍລິສັດຫຼັກຊັບ;
4. ບັນຊີລາຍຊື່ຜູ້ຖືຮຸ້ນໃນສະຖາບັນ ທີ່ຖືຮຸ້ນແຕ່ ຊາວຫ້າສ່ວນຮ້ອຍຂຶ້ນໄປ;
5. ສໍາເນົາ ໃບຢັ້ງຢືນການສ້າງຕັ້ງ ຫຼື ສັນຍາຄຸ້ມຄອງບໍລິຫານກອງທຶນຮ່ວມ ທີ່ຂຶ້ນທະບຽນຈາກອົງການທີ່ກ່ຽວຂ້ອງຂອງຕ່າງປະເທດ ສໍາລັບກອງທຶນທີ່ສ້າງຕັ້ງຂຶ້ນໃນຮູບແບບສັນຍາ.

**ມາດຕາ 6 ການພິຈາລະນາການຂໍລະຫັດການຊື້-ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ**

ຕະຫຼາດຫຼັກຊັບ ຕ້ອງພິຈາລະນາ ຫຼື ປະຕິເສດ ການອອກລະຫັດໃຫ້ແກ່ຜູ້ລົງທຶນຕ່າງປະເທດ ພາຍໃນກຳນົດເວລາ ສາມວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານປະກອບ ຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ. ກໍລະນີປະຕິເສດ ຕ້ອງແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

ຕະຫຼາດຫຼັກຊັບ ຕ້ອງສ້າງກົນໄກການຊອກຮູ້ລູກຄ້າ (Know Your Customers/Customer Due Diligence ຂຽນຫຍໍ້ KYC/CDD) ເພື່ອເປັນບ່ອນອີງພິຈາລະນາອອກລະຫັດການຊື້-ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ.

## ໝວດທີ 3
## ການເຄື່ອນໄຫວຊື້-ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ

**ມາດຕາ 7 ສິດ ແລະ ໜ້າທີ່ຂອງຜູ້ລົງທຶນຕ່າງປະເທດ**

ຜູ້ລົງທຶນຕ່າງປະເທດມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຊື້-ຂາຍຫຼັກຊັບ ຢູ່ ສປປ ລາວ;
2. ຮັບຮູ້ຂໍ້ມູນຂ່າວສານກ່ຽວກັບວຽກງານຫຼັກຊັບ ຫຼື ຂໍ້ມູນທີ່ຕິດພັນກັບການຊື້-ຂາຍຫຼັກຊັບ ຕາມລະບຽບການ;
3. ລາຍງານຕໍ່ ຕະຫຼາດຫຼັກຊັບ ຫຼື ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເມື່ອພົບເຫັນ ຫຼື ຮັບຮູ້ ການຊື້-ຂາຍຫຼັກຊັບທີ່ຜິດປົກກະຕິ ຫຼື ການລະເມີດລະບຽບກົດໝາຍ ໃນຂົງເຂດວຽກງານຫຼັກຊັບ;
4. ສິດ ແລະ ໜ້າທີ່ອື່ນ ຕາມການກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ.

**ມາດຕາ 8 ຂອບເຂດການຖືຄອງຫຼັກຊັບ**

ຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຫຼັກຊັບ ປະເພດຮຸ້ນ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ຫຼື ບໍລິສັດຈົດທະບຽນ ຕາມບູລິມະສິດໃດໜຶ່ງຕາມລຳດັບ ດັ່ງນີ້:

1. ຕາມການກຳນົດໄວ້ໃນລະບຽບກົດໝາຍຂອງຂະແໜງການທີ່ກ່ຽວຂ້ອງ;
2. ຕາມການກຳນົດຂອງມະຕິກອງປະຊຸມຜູ້ຖືຮຸ້ນ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ຫຼື ບໍລິສັດຈົດທະບຽນ;
3. ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນແຕ່ລະກໍລະນີ.

ສຳລັບການຖືຄອງຫຼັກຊັບປະເພດຮຸ້ນກູ້ ຫຼື ຫຼັກຊັບປະເພດອື່ນ ແມ່ນປະຕິບັດຕາມມະຕິກອງປະຊຸມຜູ້ຖືຮຸ້ນ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ຫຼື ບໍລິສັດຈົດທະບຽນ.

**ມາດຕາ 9 ການເປີດບັນຊີເງິນຝາກສຳລັບຊື້-ຂາຍຫຼັກຊັບ ແລະ ບັນຊີຫຼັກຊັບ**

ພາຍຫຼັງໄດ້ຮັບລະຫັດການຊື້-ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ ຜູ້ລົງທຶນຕ່າງປະເທດ ຕ້ອງເປີດ ສອງບັນຊີ ດັ່ງນີ້:

1. ເປີດບັນຊີເງິນຝາກ ກະແສລາຍວັນ ຫຼື ປະຢັດ ເປັນສະກຸນເງິນກີບສຳລັບຊື້-ຂາຍຫຼັກຊັບ ນຳທະນາຄານຕົວແທນເພື່ອການຊຳລະ ດ້ວຍຕົນເອງ ຫຼື ຜ່ານທະນາຄານດູແລຊັບສິນ ທີ່ຕົນໄດ້ມອບສິດຢ່າງເປັນລາຍລັກອັກສອນ ແລະ ເງິນທີ່ນຳເຂົ້າບັນຊີດັ່ງກ່າວ ຕ້ອງເປັນເງິນໂອນຜ່ານລະບົບທະນາຄານ ເທົ່ານັ້ນ;

2. ເປີດບັນຊີຫຼັກຊັບກັບ ບໍລິສັດຫຼັກຊັບທີ່ຕົນມີຈຸດປະສົງໃຊ້ບໍລິການ ດ້ວຍຕົນເອງ ຫຼື ຜ່ານ ທະນາຄານດູແລຊັບສິນ ທີ່ຕົນໄດ້ມອບສິດຢ່າງເປັນລາຍລັກອັກສອນ.

**ມາດຕາ 10 ການໂອນເງິນເຂົ້າ-ອອກ ສປປ ລາວ**

ການໂອນເງິນເຂົ້າ-ອອກ ສປປ ລາວ ຂອງຜູ້ລົງທຶນຕ່າງປະເທດ ທີ່ຕິດພັນກັບການຊື້-ຂາຍຫຼັກຊັບ ຢູ່ ສປປ ລາວ ແມ່ນໃຫ້ປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 11 ການຊື້-ຂາຍຫຼັກຊັບ**

ການຊື້-ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ ຕ້ອງສົ່ງຄໍາສັ່ງຊື້-ຂາຍຜ່ານບໍລິສັດຫຼັກຊັບ ທີ່ຕົນໄດ້ເປີດບັນຊີຫຼັກຊັບນໍາ.

## ໝວດທີ 4
## ຂໍ້ຫ້າມ, ການໂຈະ ແລະ ການຍົກເລີກ ລະຫັດການຊື້-ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ

**ມາດຕາ 12 ຂໍ້ຫ້າມ**

ຫ້າມຕະຫຼາດຫຼັກຊັບ ອອກລະຫັດການຊື້-ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ ດັ່ງນີ້:

1. ອອກເກີນໜຶ່ງລະຫັດ ໃຫ້ຜູ້ລົງທຶນຕ່າງປະເທດໜຶ່ງລາຍ;
2. ອອກໃຫ້ແກ່ຜູ້ລົງທຶນຕ່າງປະເທດ ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ;
3. ອອກໃຫ້ແກ່ຜູ້ລົງທຶນຕ່າງປະເທດ ທີ່ຖືກຫ້າມໃຫ້ເຄື່ອນໄຫວໃນຂົງເຂດວຽກງານຫຼັກຊັບ ຈາກອົງການຄຸ້ມຄອງວຽກງານຫຼັກຊັບທັງ ພາຍໃນ ແລະ ຕ່າງປະເທດ;
4. ອອກໃຫ້ແກ່ຜູ້ລົງທຶນຕ່າງປະເທດ ທີ່ຖືກກໍານົດໄວ້ໃນຍັດຕິ S/RES/1267 ປີ 1999 S/RES/1373 ປີ 2001 ແລະ ຍັດຕິອື່ນທີ່ກ່ຽວຂ້ອງ ຂອງສະພາຄວາມໝັ້ນຄົງ ອົງການສະຫະປະຊາຊາດ.

**ມາດຕາ 13 ການໂຈະການເຄື່ອນໄຫວລະຫັດການຊື້-ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ**

ຕະຫຼາດຫຼັກຊັບ ສາມາດໂຈະການເຄື່ອນໄຫວລະຫັດການຊື້-ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ພົບເຫັນການສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 5 ຂອງລະບຽບສະບັບນີ້ ພາຍຫຼັງໄດ້ອອກລະຫັດການຊື້-ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ;
2. ຊື້-ຂາຍຫຼັກຊັບຜິດປົກກະຕິ ທີ່ອາດສົ່ງຜົນເສຍຫາຍຕໍ່ ຜູ້ລົງທຶນ, ບໍລິສັດອອກຈໍາໜ່າຍຫຼັກຊັບ, ບໍລິສັດຈົດທະບຽນ ຫຼື ຕະຫຼາດຫຼັກຊັບ;
3. ເຈົ້າໜ້າທີ່ ທີ່ມີສິດອໍານາດສົງໄສວ່າເງິນໃນບັນຊີເງິນຝາກສໍາລັບຊື້-ຂາຍຫຼັກຊັບ ໄດ້ມາຈາກການກະທໍາຜິດກົດໝາຍຂອງ ສປປ ລາວ ຫຼື ສາກົນ;
4. ຕາມການສະເໜີຈາກອົງການທີ່ມີສິດອໍານາດ;
5. ລະເມີດລະບຽບສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງໃນຂົງເຂດວຽກງານຫຼັກຊັບ ທີ່ມີລັກສະນະເບົາ.

ຕະຫຼາດຫຼັກຊັບ ຕ້ອງແຈ້ງກ່ຽວກັບການໂຈະການເຄື່ອນໄຫວລະຫັດການຊື້-ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດພ້ອມດ້ວຍເຫດຜົນ ແລະ ກຳນົດເວລາການແກ້ໄຂຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ບໍລິສັດຫຼັກຊັບ ແລະ ທະນາຄານດູແລຊັບສິນ ຊາບທັນທີ.

ຜູ້ລົງທຶນຕ່າງປະເທດທີ່ຖືກໂຈະການເຄື່ອນໄຫວລະຫັດການຊື້-ຂາຍຫຼັກຊັບ ບໍ່ສາມາດເຄື່ອນໄຫວຊື້-ຂາຍຫຼັກຊັບໄດ້.

ຜູ້ລົງທຶນຕ່າງປະເທດ ຕ້ອງແກ້ໄຂບັນຫາທີ່ກຳນົດໄວ້ໃນວັກສອງຂອງມາດຕານີ້ ຕາມກຳນົດເວລາທີ່ຕະຫຼາດຫຼັກຊັບ ກຳນົດ.

ຕະຫຼາດຫຼັກຊັບ ຕ້ອງຍົກເລີກການໂຈະການເຄື່ອນໄຫວລະຫັດການຊື້-ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ ທັນທີ ພາຍຫຼັງຜູ້ລົງທຶນຕ່າງປະເທດແກ້ໄຂບັນຫາສຳເລັດ ພ້ອມທັງແຈ້ງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບຊາບ.

**ມາດຕາ 14 ການໂຈະການເຄື່ອນໄຫວບັນຊີເງິນຝາກສຳລັບຊື້-ຂາຍຫຼັກຊັບ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີສິດສັ່ງໂຈະການເຄື່ອນໄຫວບັນຊີເງິນຝາກສຳລັບຊື້-ຂາຍຫຼັກຊັບ ຂອງຜູ້ລົງທຶນຕ່າງປະເທດ ກໍລະນີ ລະຫັດການຊື້-ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດຖືກໂຈະການເຄື່ອນໄຫວ.

ບັນຊີເງິນຝາກສຳລັບຊື້-ຂາຍຫຼັກຊັບ ຂອງຜູ້ລົງທຶນຕ່າງປະເທດ ສາມາດເຄື່ອນໄຫວປົກກະຕິພາຍຫຼັງໄດ້ຮັບການຍົກເລີກການໂຈະການເຄື່ອນໄຫວລະຫັດການຊື້-ຂາຍຫຼັກຊັບຂອງ ຜູ້ລົງທຶນຕ່າງປະເທດຕາມການເຫັນດີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 15 ການຍົກເລີກລະຫັດການຊື້-ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ**

ຕະຫຼາດຫຼັກຊັບ ຕ້ອງຍົກເລີກລະຫັດການຊື້-ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຜູ້ລົງທຶນຕ່າງປະເທດ ຂໍຍົກເລີກດ້ວຍຄວາມສະໝັກໃຈ;
2. ຜູ້ລົງທຶນຕ່າງປະເທດ ປະເພດສະຖາບັນ ຖືກຍຸບເລີກກິດຈະການ ຫຼື ລົ້ມລະລາຍ;
3. ລະເມີດລະບຽບສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງໃນຂົງເຂດວຽກງານຫຼັກຊັບ ທີ່ມີລັກສະນະຮ້າຍແຮງ;
4. ເຈົ້າໜ້າທີ່ທີ່ມີສິດອຳນາດ ກວດພົບເຫັນເງິນໃນບັນຊີເງິນຝາກສຳລັບຊື້-ຂາຍຫຼັກຊັບ ໄດ້ມາຈາກການກະທຳຜິດກົດໝາຍຂອງ ສປປ ລາວ ຫຼື ສາກົນ;
5. ຜູ້ລົງທຶນຕ່າງປະເທດ ບໍ່ແກ້ໄຂຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13 ວັກສີ່ ຂອງລະບຽບສະບັບນີ້.

ຕະຫຼາດຫຼັກຊັບ ຕ້ອງແຈ້ງກ່ຽວກັບການຍົກເລີກລະຫັດການຊື້-ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດໃຫ້ບໍລິສັດຫຼັກຊັບ ເພື່ອແຈ້ງຕໍ່ຜູ້ລົງທຶນຕ່າງປະເທດ ແລະ ທະນາຄານດູແລຊັບສິນ ຊາບທັນທີ ກໍລະນີ ຜູ້ລົງ ທຶນຕ່າງປະເທດໃຊ້ບໍລິການທະນາຄານດູແລຊັບສິນ.

ການຍົກເລີກລະຫັດການຊື້-ຂາຍຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ ຕ້ອງປະຕິບັດພາຍຫຼັງສຳເລັດການສະສາງ ແລະ ຊຳລະທຸລະກຳຫຼັກຊັບ ແລະ ຕ້ອງປະຕິບັດຕາມລະບຽບການສະເພາະຂອງຕະຫຼາດຫຼັກຊັບ.

**ມາດຕາ 16 ການປິດບັນຊີເງິນຝາກສຳລັບຊື້-ຂາຍຫຼັກຊັບ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີສິດແຈ້ງໃຫ້ທະນາຄານຕົວແທນເພື່ອການຊຳລະ ປິດບັນຊີເງິນຝາກສຳລັບຊື້-ຂາຍຫຼັກຊັບ ຂອງຜູ້ລົງທຶນຕ່າງປະເທດ ກໍລະນີ ລະຫັດການຊື້-ຂາຍຫຼັກຊັບ ຂອງຜູ້ລົງທຶນຕ່າງປະເທດ ຖືກຍົກເລີກ.

ກໍລະນີ ຫາກພົບເຫັນເງິນໃນບັນຊີເງິນຝາກສຳລັບຊື້-ຂາຍຫຼັກຊັບ ໄດ້ມາຈາກການກະທຳຜິດກົດໝາຍຂອງ ສປປ ລາວ ຫຼື ສາກົນ ຈະຖືກປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 17 ການສະສາງ ແລະ ຊຳລະທຸລະກຳຫຼັກຊັບ**

ການສະສາງ ແລະ ຊຳລະທຸລະກຳຫຼັກຊັບ ຕ້ອງປະຕິບັດຕາມກໍລະນີ ດັ່ງນີ້:

ກໍລະນີ ບໍ່ມີຫຼັກຊັບໃນບັນຊີຫຼັກຊັບ ບໍລິສັດຫຼັກຊັບ ຕ້ອງປິດບັນຊີຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ ທັນທີ ພ້ອມທັງແຈ້ງໃຫ້ ຜູ້ລົງທຶນຕ່າງປະເທດ ແລະ ທະນາຄານດູແລຊັບສິນ ຊາບທັນທີ ກໍລະນີ ຜູ້ລົງທຶນຕ່າງປະເທດ ໃຊ້ບໍລິການທະນາຄານດູແລຊັບສິນ.

ກໍລະນີ ມີຫຼັກຊັບຢູ່ໃນບັນຊີຫຼັກຊັບ ບໍລິສັດຫຼັກຊັບ ຕ້ອງແຈ້ງໃຫ້ຜູ້ລົງທຶນຕ່າງປະເທດ ແລະ ທະນາຄານດູແລຊັບສິນ ຊາບທັນທີ ເພື່ອໃຫ້ຜູ້ລົງທຶນຕ່າງປະເທດ ດຳເນີນການຂາຍ ຫຼື ໂອນຫຼັກຊັບຂອງຕົນໃຫ້ສຳເລັດພາຍໃນກຳນົດເວລາ ເກົ້າສິບວັນ.

ກໍລະນີ ຜູ້ລົງທຶນຕ່າງປະເທດ ບໍ່ສາມາດດຳເນີນການຂາຍ ຫຼື ໂອນຫຼັກຊັບ ຕາມກຳນົດໄວ້ໃນວັກສາມຂອງມາດຕານີ້ ບໍລິສັດຫຼັກຊັບ ຕ້ອງດຳເນີນການຂາຍ ຫຼື ໂອນຫຼັກຊັບ ພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນສິ້ນສຸດການຂາຍ ຫຼື ໂອນຫຼັກຊັບຕາມກຳນົດເວລາດັ່ງກ່າວ. ຖ້າບໍລິສັດຫຼັກຊັບ ຍັງບໍ່ສາມາດຂາຍ ຫຼື ໂອນຫຼັກຊັບໄດ້ ພາຍໃນກຳນົດເວລາ ສາມສິບວັນ ບໍລິສັດຫຼັກຊັບ ຕ້ອງສະເໜີຂະຫຍາຍເວລາຕໍ່ຕະຫຼາດຫຼັກຊັບ ຕື່ມອີກ ແຕ່ບໍ່ເກີນ ສາມສິບວັນ.

ພາຍຫຼັງສຳເລັດການຂາຍ ຫຼື ໂອນຫຼັກຊັບ ບໍລິສັດຫຼັກຊັບ ຕ້ອງປິດບັນຊີຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ ແລະ ລາຍງານຜົນຂອງການຂາຍ ຫຼື ໂອນຫຼັກຊັບໃຫ້ຕະຫຼາດຫຼັກຊັບ ຊາບທັນທີ.

ກໍລະນີ ເຈົ້າໜ້າທີ່ ທີ່ມີສິດອຳນາດ ຫາກກວດພົບເຫັນ ຫຼັກຊັບໃນບັນຊີຊື້-ຂາຍຫຼັກຊັບ ໄດ້ມາຈາກກະທຳຜິດກົດໝາຍຂອງ ສປປ ລາວ ຫຼື ສາກົນ ການສະສາງ ແລະ ຊຳລະທຸລະກຳຫຼັກຊັບ ຈະບໍ່ສາມາດດຳເນີນການໄດ້ ຈົນກວ່າຈະໄດ້ຮັບຄຳສັ່ງ ຈາກຜູ້ມີສິດອຳນາດທີ່ກ່ຽວຂ້ອງ.

ກໍລະນີ ມີການສະສາງ ແລະ ຊຳລະທຸລະກຳຫຼັກຊັບ ດ້ວຍຮູບແບບການໂອນຫຼັກຊັບ ຕ້ອງປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 5
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 18 ນະໂຍບາຍຕໍ່ຜູ້ມີຜົນງານ**

ຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ, ທະນາຄານດູແລຊັບສິນ, ທະນາຄານຕົວແທນເພື່ອການຊຳລະ, ບໍລິສັດອອກຈຳໜ່າຍຫຼັກຊັບ, ບໍລິສັດຈົດທະບຽນ, ຜູ້ລົງທຶນຕ່າງປະເທດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການເຄື່ອນໄຫວໃນຂົງເຂດວຽກງານຫຼັກຊັບ ຢູ່ ສປປ ລາວ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດລະບຽບການສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການສະເພາະ.

**ມາດຕາ 19 ມາດຕະການຕໍ່ຜູ້ລະເມີດ**

ຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ, ທະນາຄານດູແລຊັບສິນ, ທະນາຄານຕົວແທນເພື່ອການຊໍາລະ, ບໍລິສັດອອກຈໍາໜ່າຍຫຼັກຊັບ, ບໍລິສັດຈົດທະບຽນ, ຜູ້ລົງທຶນຕ່າງປະເທດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການເຄື່ອນໄຫວໃນຂົງເຂດວຽກງານຫຼັກຊັບ ຢູ່ ສປປ ລາວ ທີ່ລະເມີດລະບຽບ ສະບັບນີ້ ທີ່ກໍ່ໃຫ້ເກີດຄວາມເສັຍຫາຍໃຫ້ແກ່ ລັດ, ສັງຄົມ, ບຸກຄົນ ຫຼື ນິຕິບຸກຄົນ ຈະຖືກ ສຶກສາອົບຮົມ, ປັບໃໝໃຊ້ແທນຄ່າເສັຍຫາຍທາງແພ່ງ ຫຼື ຮັບຜິດຊອບທາງອາຍາ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍຫຼັກຊັບ 166, 168, 169 ແລະ 170 ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 20 ການຈັດຕັ້ງປະຕິບັດ**

ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ, ທະນາຄານດູແລຊັບສິນ, ທະນາຄານຕົວແທນເພື່ອການຊໍາລະ, ບໍລິສັດອອກຈໍາໜ່າຍຫຼັກຊັບ, ບໍລິສັດຈົດທະບຽນ, ຜູ້ລົງທຶນຕ່າງປະເທດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກັບການເຄື່ອນໄຫວໃນຂົງເຂດວຽກງານຫຼັກຊັບ ຢູ່ ສປປ ລາວ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດລະບຽບສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນຢ່າງເຂັ້ມງວດ.

**ມາດຕາ 21 ຜົນສັກສິດ**

ລະບຽບສະບັບນີ້ ໃຊ້ປ່ຽນແທນ ຂໍ້ຕົກລົງວ່າດ້ວຍລະບຽບການຄຸ້ມຄອງການຊື້-ຂາຍຮຸ້ນຂອງນັກລົງທຶນຕ່າງປະເທດ ໃນຕະຫຼາດຫຼັກຊັບ ສະບັບເລກທີ 012/ຄລຕ, ລົງວັນທີ 19 ພຶດສະພາ 2011.

ລະບຽບສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານ ຄະນະກໍາມະການຄຸ້ມຄອງຫຼັກຊັບ

ຄະນະກໍາມະການຄຸ້ມຄອງຫຼັກຊັບ
ປະທານ

ດຣ.ບຸນປອນ ບຸດຕະນະວົງ